IFAD

Enabling poor rural people to overcome poverty

ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ

ກົມຊົນລະປະທານ

---

## ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

# ຄູ່ມືແນະນຳສຳລັບຕິດຕາມ ແລະ ປະເມີນຜົນເມືອງ

## ສາລະບານ

A. ປະຫວັດຄວາມເປັນມາ ........ 2

B. ພື້ນທີ່ເປົ້າໝາຍໂຄງການ ........ 2

C. ກຸ່ມເປົ້າໝາຍ ........ 2

D. ຈຸດປະສົງ ແລະ ເປົ້າໝາຍໂຄງການ ........ 3

E. ກິດຈະກຳຫລັກໂຄງການ ........ 3

F. ໜ້າທີ່ພາລະບົດບາດຂອງພະນັກງານຕິດຕາມ-ປະເມີນຜົນຂັ້ນເມືອງ ........ 4

G. ການກະກຽມບົດລາຍງານໂຄງການ ........ 5

H. ການກະກຽມກອງປະຊຸມໂຄງການ ........ 5

I. ແຜນວຽກ ແລະ ບົດລາຍງານປະຈຳເດືອນຂອງພະນັກງານຕິດຕາມ-ປະເມີນຜົນເມືອງ ........ 6

J. ການລົງຕິດຕາມ ແລະ ຊຸກຍູ້ພາກສະໜາມ ........ 6

K. ຕາຕະລາງແຜນວຽກປະຈຳເດືອນໂດຍທົ່ວໄປຂອງພະນັກງານຕິດຕາມ-ປະເມີນຜົນ ........ 6

L. ເອກະສານຊ້ອນທ້າຍໂຄງການ ........ 7

ເອກະສານຊ້ອນທ້າຍ 1: ແຜນວຽກປະຈຳເດືອນ ........ 7

ເອກະສານຊ້ອນທ້າຍ 2: ບົດລາຍງານປະຈຳເດືອນດ້ານວິຊາການ ........ 7

ເອກະສານຊ້ອນທ້າຍ 4: ຮ່າງບົດລາຍງານຄວາມຄືບໜ້າໂຄງການ ........ 8

## A. ປະຫວັດຄວາມເປັນມາ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (PICSA) ໂດຍການຮ່ວມມືຂອງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ IFAD ເຊິ່ງເປັນສ່ວນໜຶ່ງທີ່ນອນໃນພື້ນທີ່ຂອງການສະໜັບສະໜູນ ໂດຍ ທະນາຄານພັດທະນາອາຊີ (ADB). ໂຄງການດັ່ງກ່າວແມ່ນຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ (MAF) ໂດຍຜ່ານ ກົມຊົນລະປະທານ (DoI). ມູນຄ່າທັງໝົດຂອງໂຄງການແມ່ນປະມານ 30 ລ້ານໂດລາສະຫະລັດ, ໃນນັ້ນປະມານ 13 ລ້ານໂດລາ ສະຫະລັດແມ່ນເງິນກູ້ຈາກ IFAD ແລະ 2,1 ລ້ານໂດລາສະຫະລັດແມ່ນທຶນສົມທົບຈາກລັດຖະບານລາວ ໃນຮູບແບບເງິນເດືອນ ພະນັກງານລັດ ແລະ ພາສີດ, ການປະກອບສ່ວນຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ 5 ລ້ານໂດລາສະຫະລັດ ແລະ ການປະກອບສ່ວນ ຈາກພາກເອກະຊົນປະມານ 1,5 ລ້ານໂດລາສະຫະລັດ. ເງິນກູ້ IFAD ໄດ້ມີຜົນບັງຄັບໃຊ້ນັບແຕ່ວັນທີ 29 ພະຈິກ 2019 ເປັນຕົ້ນ ໄປ ແລະ ວັນທີສຳເລັດໂຄງການແມ່ນ 31 ທັນວາ 2025.

## B. ພື້ນທີ່ເປົ້າໝາຍໂຄງການ

PICSA ຈະໄດ້ຈັດຕັ້ງປະຕິບັດໃນ 353 ບ້ານ, 19 ຕົວເມືອງ ຂອງ 4 ແຂວງພາກເໜືອ. PICSA ຈະໄດ້ເຊື່ອມໂຍງກັບ SRIWSM ໃນໄລຍະເລີ່ມຕົ້ນແມ່ນສຸມໃສ່ລະບົບຊົນລະປະທານ 18 ແຫ່ງ ໃນ 10 ເມືອງ ຂອງ 4 ແຂວງ ດັ່ງລາຍລະອຽດລຸ່ມນີ້:




| ໄຊຍະບູລີ | ຫຼວງພະບາງ | ຊຽງຂວາງ | ຫົວພັນ |
|---|---|---|---|
| 1.ໄຊສະຖານ | 1.ຫຼວງພະບາງ | 1.ຄູນ | 1.ຊຳເໜືອ |
| 2.ໄຊຍະບູລີ | 2.ຊຽງເງິນ | 2.ຄຳ | 2.ແອດ |
| 3.ພຽງ | 3.ນານ | 3.ແປກ | 3.ສົບເບົາ |
| 4.ປາກລາຍ | 4.ຈອມເພັດ | 4.ຜາໄຊ | 4.ວຽງໄຊ |
| 5.ທົ່ງມີໄຊ | | | 5.ຊຽງຄໍ້ |
| | | | 6.ຊຳໃຕ້ |

ເມືອງເປົ້າໝາຍ ADB 10 ເມືອງ

## C. ກຸ່ມເປົ້າໝາຍ

ໂຄງການຈະໃຫ້ການສະໜັບສະໜູນ ແລະ ການບໍລິການແກ່ຜູ້ຮັບຜົນປະໂຫຍດໃນຈຳນວນ 41.000 ຄົວເຮືອນ ຫລື ປະມານ 215.000 ຄົນ ເຊິ່ງກຸ່ມເປົ້າໝາຍແມ່ນປະກອບມີ: 15% ທີ່ເປັນຄົວເຮືອນແມ່ຍິງ, 25% ເປັນຄົນໜຸ່ມ ອາຍຸລະຫວ່າງ 15-35 ປີ , 40% ເປັນຊົນເຜົ່າ, 5% ຂອງຜູ້ທຸກຍາກທີ່ສຸດ, 25% ຂອງຜູ້ທຸກຍາກ (ຕໍ່າກວ່າເສັ້ນຄວາມທຸກຍາກສາກົນ), 50% ຂອງກຸ່ມ ໃຫຍ່ທີ່ໃກ້ຄວາມທຸກຍາກ ແລະ ມີຊີວິດຢູ່ຕໍ່າກວ່າລະດັບລາຍໄດ້ຂອງລະດັບປານກາງ.

# D. ຈຸດປະສົງ ແລະ ເປົ້າຫມາຍໂຄງການ

**ເປົ້າຫມາຍໂຄງການ:** ເປັນການປະກອບສ່ວນເຂົ້າໃນການປັບປຸງຄວາມຢືດຢຸ່ນດ້ານຊີວິດການເປັນຢູ່ ແລະ ຄວາມຍືນຍົງ ໃນຂົງເຂດການສະຫນັບສະຫນູນຂອງໂຄງການ (ເປົ້າຫມາຍ: 36.900 ຄຮ ຫລື 191.880 ຄົນ)

**ຈຸດປະສົງຂອງການພັດທະນາ:** ເພື່ອເຮັດໃຫ້ບັນດາຄົວເຮືອນທີ່ໄດ້ຮັບຜົນປະໂຫຍດໄດ້ນໍາໃຊ້ຜົນໄດ້ຮັບ ໂດຍການສະຫນັບສະຫນູນຈາກໂຄງການ ເພື່ອຄວາມຍືນຍົງ ແລະ ການພັດທະນາເສດຖະກິດໃນທ້ອງຖິ່ນ. ລວມທັງສະຫນັບສະຫນູນເພື່ອບັນລຸເຖິງຜົນໄດ້ຮັບຂອງໂຄງການ ໂດຍການເພີ່ມທະວີ ແລະ ຂັບເຄື່ອນຢ່າງແຂງແຮງ ໃນຂົງເຂດວຽກງານດ້ານການຜະລິດກະສິກໍາຂະຫນາດນ້ອຍ, ການເຊື່ອມໂຍງກັບຕະຫລາດ, ດ້ານໂພຊະນາການ

## ຕົວຊີ້ວັດດ້ານຜົນໄດ້ຮັບ




# E. ກິດຈະກໍາຫລັກໂຄງການ

## ອົງປະກອບ-1: ການພັດທະນາການຜະລິດແບບກະເສດສຸມ



## ອົງປະກອບ-2: ການພັດທະນາຕ່ອງໂສ້ມູນຄ່າ




## ອົງປະກອບ-3: ການປັບປຸງວຽກງານໂພຊະນາການ




# F. ໜ້າທີ່ພາລະບົດບາດຂອງພະນັກງານຕິດຕາມ-ປະເມີນຜົນຂັ້ນເມືອງ

- ປະກອບສ່ວນເຂົ້າໃນການພັດທະນາລະບົບຕິດຕາມ-ປະເມີນຜົນໂຄງການ
- ປະກອບສ່ວນໃນການກະກຽມແຜນວຽກ ແລະ ງົບປະມານປະຈຳປີໃນຂັ້ນເມືອງ
- ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດທຽບກັບແຜນວຽກ ແລະ ງົບປະມານໃນແຜນປີ
- ວາງແຜນ ແລະ ເຮັດບົດລາຍງານສະເພາະວຽກຕິດຕາມ-ປະເມີນຜົນ ໃຫ້ແກ່ຊ່ຽວຊານຕິດຕາມປະເມີນຜົນຂັ້ນສູນກາງ
- ລົງຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກິດຈະກຳພາກສະໜາມ ເພື່ອໃຫ້ຄຳແນະນຳກ່ຽວກັບບັນຫາທີ່ຊັກຊ້າ ເພື່ອໃຫ້ບັນລຸຕາມແຜນທີ່ວາງໄວ້

- ຝຶກອົບຮົມໃຫ້ແກ່ພະນັກງານກ່ຽວຂ້ອງຂັ້ນເມືອງ ກ່ຽວກັບຫລັກການ ແລະ ເຕັກນິກດ້ານຕິດຕາມ-ປະເມີນຜົນ ແລະ ການເກັບກຳຂໍ້ມູນ
- ອັບເດດ ແລະ ສັງລວມບັນດາລະບົບຖານຂໍ້ມູນດ້ານຕິດຕາມ-ປະເມີນຜົນຂັ້ນເມືອງ
- ຊ່ວຍກະກຽມບົດລາຍງານ ແລະ ກອງປະຊຸມປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປະຈຳປີ ຂອງເມືອງ
- ຮັບຜິດຊອບວຽກອື່ນໆ ຕາມການມອບຫມາຍຂອງຊູ່ຽວຊານ ແລະ ຄະນະຄຸ້ມຄອງບໍລິຫານໂຄງການ.

## G. ການກະກຽມບົດລາຍງານໂຄງການ

| # | ບົດລາຍງານ | ກຳນົດມື້ສົ່ງ | ພາກສ່ວນທີ່ສົ່ງໃຫ້ |
|---|---|---|---|
| 1 | ບົດລາຍງານປະຈຳເດືອນ | ທຸກວັນສຸກ ຂອງອາທິດທີ 3 | - ຫ້ອງການ ແລະ ພະແນກ ກປ<br>- ຂະແຫນງການກ່ຽວຂ້ອງເມືອງ |
| 2 | ບົດລາຍງານປະຈຳໄຕມາດ | ວັນສຸກອາທິດທຳອິດຂອງໄຕມາດຕໍ່ໄປ | - ຫ້ອງການ ແລະ ພະແນກ ກປ<br>- ຂະແຫນງການກ່ຽວຂ້ອງເມືອງ<br>- ຫນ່ວຍງານຈັດຕັ້ງປະຕິບັດສູນກາງ |
| 3 | ບົດລາຍງານປະຈຳປີ | ທ້າຍອາທິດທຳອິດໃນເດືອນ ມັງກອນ ຂອງທຸກປີ | - ຫ້ອງການ ແລະ ພະແນກ ກປ<br>- ຂະແຫນງການກ່ຽວຂ້ອງເມືອງ<br>- ຫນ່ວຍງານຈັດຕັ້ງປະຕິບັດສູນກາງ |

## H. ການກະກຽມກອງປະຊຸມໂຄງການ

| # | ກອງປະຊຸມ | ກຳນົດມື້ຈັດກອງປະຊຸມ | ເປົ້າຫມາຍເຂົ້າຮ່ວມປະຊຸມ |
|---|---|---|---|
| 1 | ກອງປະຊຸມປະຈຳເດືອນ | ໃນລະຫວ່າງອາທິດທີ 4 ຂອງທຸກເດືອນ | - ຫົວຫນ້າຫ້ອງການ, ຜູ້ປະສານງານ ແລະ ພາກສ່ວນກ່ຽວຂ້ອງຫ້ອງການ ກປ<br>- ຂະແຫນງການກ່ຽວຂ້ອງເມືອງ |
| 2 | ກອງປະຊຸມປະຈຳໄຕມາດ | ໃນລະຫວ່າງອາທິດທຳອິດຂອງໄຕມາດຕໍ່ໄປ | - ທ່ານ ຮອງເຈົ້າເມືອງ, ຫົວຫນ້າຫ້ອງການ, ຜູ້ປະສານງານ, ພາກສ່ວນກ່ຽວຂ້ອງຫ້ອງການ ກປ ແລະ ແຂວງ<br>- ຂະແຫນງການກ່ຽວຂ້ອງເມືອງ<br>- ພາກສ່ວນກ່ຽວຂ້ອງຂັ້ນສູນກາງ (ຕາມຄວາມເຫມາະສົມ) |
| 3 | ກອງປະຊຸມປະຈຳປີ | ທ້າຍອາທິດທຳອິດໃນເດືອນ ມັງກອນ ຂອງທຸກປີ | - ທ່ານ ຮອງເຈົ້າເມືອງ, ຫົວຫນ້າຫ້ອງການ, ຜູ້ປະສານງານ, ພາກສ່ວນກ່ຽວຂ້ອງຫ້ອງການ ກປ ແລະ ແຂວງ<br>- ຂະແຫນງການກ່ຽວຂ້ອງເມືອງ<br>- ພາກສ່ວນກ່ຽວຂ້ອງຂັ້ນສູນກາງ (ຕາມຄວາມເຫມາະສົມ) |

## I. ແຜນວຽກ ແລະ ບົດລາຍງານປະຈຳເດືອນຂອງພະນັກງານຕິດຕາມ-ປະເມີນຜົນເມືອງ

- ✓ ພະນັກງານຕິດຕາມ ແລະ ປະເມີນຜົນເມືອງຕ້ອງໄດ້ເຮັດແຜນວຽກ ແລະ ບົດລາຍງານປະຈຳເດືອນ ເພື່ອລາຍງານໃຫ້ແກ່ຊ່ຽວຊານດ້ານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ ໃນການທົບທວນ ແລະ ວາງແຜນ
- ✓ ແຜນວຽກ ແລະ ບົດລາຍງານຕ້ອງໃຫ້ສຳເລັດ ແລະ ສົ່ງໃຫ້ ຊ່ຽວຊານຜູ້ຮັບຜິດຊອບຢ່າງຊ້າສຸດແມ່ນວັນສຸກອາທິດທີ 3 ຂອງທຸກໆເດືອນ
- ✓ ບົດລາຍງານແມ່ນປະກອບຕາມແບບຟອມທີ່ອອກແບບໂດຍໂຄງການ ເຊິ່ງເປັນການລາຍງານໃນລະຫວ່າງວັນທີ 24 ຂອງເດືອນກ່ອນ ຫາ 25 ຂອງເດືອນປະຈຸບັນ. ມີແຜນປະຈຳເດືອນ ໃນລະຫວ່າງວັນທີ 24 ຂອງເດືອນປະຈຸບັນ ຫາ 25 ຂອງເດືອນຕໍ່ໄປ. ລວມທັງໃບບັນທຶກການເຮັດວຽກປະຈຳວັນຂອງພະນັກງານ (Timesheet) ແລະ ໃບສະເໜີຂໍເບີກເງິນເດືອນ (Invoice) ສົ່ງໃຫ້ຊ່ຽວຊານກວດກາ ແລະ ການຢັ້ງຢືນໂດຍ ຫົວໜ້າປະສານງານໂຄງການຂັ້ນເມືອງ ເພື່ອສົ່ງໃຫ້ການເງິນໃນການເບີກຈ່າຍເງິນເດືອນຕາມລະບຽບການ ແລະ ສັນຍາໂຄງການ.

## J. ການລົງຕິດຕາມ ແລະ ຊຸກຍູ້ພາກສະໜາມ

- ✓ ພະນັກງານຕິດຕາມ ແລະ ປະເມີນຜົນເມືອງຕ້ອງໄດ້ລົງຕິດຕາມການຈັດຕັ້ງປະຕິບັດກິດຈະກຳໃນພາກສະໜາມ ໃນລະຫວ່າງການເລີ່ມຕົ້ນ ແລະ ສຳເລັດການຈັດຕັ້ງປະຕິບັດກິດຈະກຳທີ່ກ່ຽວຂ້ອງໂຄງການ ຢ່າງໜ້ອຍແມ່ນເດືອນລະຄັ້ງ
- ✓ ການລົງຕິດຕາມພາກສະໜາມຄວນລົງກ່ອນ 1 ອາທິດ ຂອງກອງປະຊຸມປະຈຳເດືອນ, ໄຕມາດ ເພື່ອຕິດຕາມຄວາມຄືບໜ້າ ແລະ ມີຂໍ້ມູນໃນການໃຫ້ຄຳແນະນຳໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງໃນລະຫວ່າງກອງປະຊຸມ

## K. ຕາຕະລາງແຜນວຽກປະຈຳເດືອນໂດຍທົ່ວໄປຂອງພະນັກງານຕິດຕາມ-ປະເມີນຜົນ

| # | ກິດຈະກຳ | ອາທິດ 1 | ອາທິດ 2 | ອາທິດ 3 | ອາທິດ 4 |
|---|---|---|---|---|---|
| 1 | ເຮັດວຽກທີ່ຫ້ອງການ (ອັບເດລະບົບຂໍ້ມູນ, ປະຊຸມດ້ານວິຊາການກັບຊ່ຽວຊານ...) | x | | | |
| 2 | ລົງຕິດຕາມການຈັດຕັ້ງປະຕິບັດກິດຈະກຳພາກສະໜາມ | | x | | |
| 3 | ກະກຽມບົດລາຍງານ ແລະ ກອງປະຊຸມ | | | x | |
| 4 | ອຳນວຍຄວາມສະດວກ ແລະ ຮ່ວມກອງປະຊຸມປະຈຳເດືອນ, ໄຕມາດ | | | | x |
| 5 | ເຮັດວຽກອື່ນຕາມການມອບໝາຍຂອງໂຄງການ | | | | x |

# L. ເອກະສານຊ້ອນທ້າຍໂຄງການ

## ເອກະສານຊ້ອນທ້າຍ 1: ແຜນວຽກປະຈຳເດືອນ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

**ແຜນວຽກປະຈຳເດືອນຂອງພະນັກງານໂຄງການຂັ້ນເມືອງ**

| ຊື່ | ຕຳແໜ່ງ | ວັນທີ | | | ເມືອງ | ແຂວງ |
|---|---|---|---|---|---|---|
| | | 01/08/2021 | ຫາ | 31/08/2021 | | |

| ລ.ດ | ກິດຈະກຳ | 01/08/2021 | 02/08/2021 | 03/08/2021 | 04/08/2021 | 05/08/2021 | 06/08/2021 | 07/08/2021 | 08/08/2021 | 09/08/2021 | 10/08/2021 | 11/08/2021 | 12/08/2021 | 13/08/2021 | 14/08/2021 | 15/08/2021 | 16/08/2021 | 17/08/2021 | 18/08/2021 | 19/08/2021 | 20/08/2021 | 21/08/2021 | 22/08/2021 | 23/08/2021 | 24/08/2021 | 25/08/2021 | 26/08/2021 | 27/08/2021 | 28/08/2021 | 29/08/2021 | 30/08/2021 | 31/08/2021 | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ວັນ | Sun | Mon | Tue | Wed | Thu | Fri | Sat | Sun | Mon | Tue | Wed | Thu | Fri | Sat | Sun | Mon | Tue | Wed | Thu | Fri | Sat | Sun | Mon | Tue | Wed | Thu | Fri | Sat | Sun | Mon | Tue | |
| | ສະຖານທີ່ | ບ້ານ 1 | ບ້ານ 2 | ບ້ານ 3 | ບ້ານ 4 | | | | | | | | | | | | | | | | | | | | | | | | | | | | |
| 1 | | | | | | | | | | | | | | | | | | | | | | | | | | | | | | | | | |
| 2 | | | | | | | | | | | | | | | | | | | | | | | | | | | | | | | | | |
| 3 | | | | | | | | | | | | | | | | | | | | | | | | | | | | | | | | | |
| 7 | | | | | | | | | | | | | | | | | | | | | | | | | | | | | | | | | |

ກະລຸນາໝາຍ x ໃສ່ຫ້ອງວັນທີເຮັດວຽກ

**<u>ຜູ້ຂຶ້ນແຜນ</u>**

## ເອກະສານຊ້ອນທ້າຍ 2: ບົດລາຍງານປະຈຳເດືອນດ້ານວິຊາການ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ

**ບົດລາຍງານປະຈຳເດືອນຂອງພະນັກງານໂຄງການຂັ້ນເມືອງ**

ຊື່:......................................, ຕຳແໜ່ງ:.................................., ເມືອງ:............................, ແຂວງ:............................, ເດືອນ/ປີ: ດດ/ປປປປ

| ລ.ດ | ກິດຈະກຳ | ຜົນໄດ້ຮັບດ້ານປະລິມານ ແລະ ຄຸນນະພາບ (ວິທີການ, ຢູ່ໃສ, ເວລາໃດ, ຜູ້ເຂົ້າຮ່ວມ ຫຼືຜູ້ຮັບຜົນປະໂຫຍດ) | ບັນຫາທີ່ພົບເຫັນ, ຂໍ້ສະເໜີແນະ ແລະ ວິທີແກ້ໄຂ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| 7 | | | |

**<u>ຜູ້ລາຍງານ</u>**

### ເອກະສານຊ້ອນທ້າຍ 4: ຮ່າງບົດລາຍງານຄວາມຄືບໜ້າໂຄງການ

## A. ປະຫວັດຄວາມເປັນມາ

ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (PICSA) ໂດຍການຮ່ວມມືຂອງລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ IFAD ເຊິ່ງເປັນສ່ວນໜຶ່ງທີ່ນອນໃນພື້ນທີ່ຂອງການສະໜັບສະໜູນ ໂດຍທະນາຄານພັດທະນາອາຊີ (ADB). ໂຄງການດັ່ງກ່າວແມ່ນຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ (MAF) ໂດຍຜ່ານກົມຊົນລະປະທານ (DoI). ສຳລັບຂັ້ນແຂວງແມ່ນພາຍໃຕ້ການສະໜັບສະໜູນດ້ານຍຸດທະສາດ ໂດຍພະແນກກະສິກຳ ແລະ ປ່າໄມ້ ແລະ ຂັ້ນເມືອງແມ່ນຜູ້ຈັດຕັ້ງປະຕິບັດໂດຍຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ມູນຄ່າທັງໝົດຂອງໂຄງການໃນແຜນວຽກ ແລະ ງົບປະມານປະຈຳປີ xx ແມ່ນ xx ໂດລາສະຫະລັດ, ໃນນັ້ນ xx ໂດລາສະຫະລັດແມ່ນເງິນກູ້ຈາກ IFAD ແລະ xx ໂດລາສະຫະລັດແມ່ນທຶນສົມທົບຈາກລັດຖະບານລາວ, ການປະກອບສ່ວນຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ xx ໂດລາສະຫະລັດ ແລະ ການປະກອບສ່ວນຈາກພາກເອກະຊົນ xx ໂດລາສະຫະລັດ.

ຈຸດປະສົງຂອງໂຄງການ. ເປົ້າໝາຍຂອງ PICSA ແມ່ນການປະກອບສ່ວນໃນການປັບປຸງຄວາມທົນທານດ້ານຊີວິດການເປັນຢູ່ ແລະ ຄວາມຍືນຍົງພາຍໃນພື້ນທີ່ຂອງໂຄງການ. ສະຖານະພາບດ້ານລາຍຮັບ ແລະ ໂພຊະນາການຂອງຄົວເຮືອນແມ່ນຕົວບົ່ງບອກເຖິງຜົນສຳເລັດຕາມເປົ້າຫມາຍຂອງໂຄງການ.

ຈຸດປະສົງດ້ານການພັດທະນາ. ເພື່ອເຮັດໃຫ້ບັນດາຄົວເຮືອນທີ່ໄດ້ຮັບຜົນປະໂຫຍດໄດ້ນຳໃຊ້ຜົນໄດ້ຮັບ ໂດຍການສະຫນັບສະຫນູນຈາກໂຄງການ ເພື່ອຄວາມຍືນຍົງ ແລະ ການພັດທະນາເສດຖະກິດໃນທ້ອງຖິ່ນ. ລວມທັງສະຫນັບສະຫນູນເພື່ອບັນລຸເຖິງຜົນໄດ້ຮັບຂອງໂຄງການ ໂດຍການເພີ່ມທະວີ ແລະ ຂັບເຄື່ອນຢ່າງແຂງແຮງ ໃນຂົງເຂດວຽກງານດ້ານການຜະລິດກະສິກຳຂະຫນາດນ້ອຍ, ການເຊື່ອມໂຍງກັບຕະຫລາດ, ດ້ານໂພຊະນາການ.

ພື້ນທີ່ຂອງໂຄງການ. xxxxxxxxxxxxxxxxxxxxxxxx (ສຳລັບພາກນີ້ຈະໄດ້ລະບຸເຂດພື້ນທີ່ເປົ້າຫມາຍ ຂອງໂຄງການ ບ້ານເປົ້າຫມາຍໃນເຂດເນີນສູງ ແລະ ເຂດຮາບພຽງເຊັ່ນ: ຈຳນວນເມືອງ ແລະ ບ້ານເປົ້າຫມາຍ)

ຜູ້ຮັບຜົນປະໂຫຍດ ແລະ ກຸ່ມເປົ້າໝາຍ. ໂຄງການຈະໃຫ້ການສະຫນັບສະຫນູນ ແລະ ການບໍລິການແກ່ຜູ້ຮັບຜົນປະໂຫຍດໃນຈຳນວນ 41.000 ຄົວເຮືອນ ຫລື ປະມານ 215.000 ຄົນ ເຊິ່ງກຸ່ມເປົ້າໝາຍແມ່ນປະກອບມີ: 15% ທີ່ເປັນຄົວເຮືອນແມ່ຍິງ, 25% ເປັນຄົນຫນຸ່ມ ອາຍຸລະຫວ່າງ 15-35 ປີ, 40% ເປັນຊົນເຜົ່າ, 5% ຂອງຜູ້ທຸກຍາກທີ່ສຸດ, 25% ຂອງຜູ້ທຸກຍາກ (ຕ່ຳກວ່າເສັ້ນຄວາມທຸກຍາກສາກົນ), 50% ຂອງກຸ່ມໃຫຍ່ທີ່ໃກ້ຄວາມທຸກຍາກ ແລະ ມີຊີວິດຢູ່ຕ່ຳກວ່າລະດັບລາຍໄດ້ຂອງລະດັບປານກາງ.

ອົງປະກອບຂອງໂຄງການ. ກອບມີ 3 ອົງປະກອບຫລັກ

- ອົງປະກອບ-1: ການພັດທະນາກະເສດສູມ. ປະກອບມີ 4 ອົງປະກອບຍ່ອຍ: (i) ອົງປະກອບຍ່ອຍ 1.1 ການຝຶກອົບຮົມພະນັກງານເມືອງ ແລະ ອຳນາດການປົກຄອງບ້ານ; (ii) ອົງປະກອບຍ່ອຍ 1.2 ການຝຶກອົບຮົມກຸ່ມນຳໃຊ້ນ້ຳ; (iii) ອົງປະກອບຍ່ອຍ 1.3 ການບໍລິການສົ່ງເສີມການກະສິກຳ; (iv) ອົງປະກອບຍ່ອຍ 1.4 ສິ່ງອຳນວຍຄວາມສະດວກໃນການລົງທຶນຂອງກຸ່ມຊາວກະສິກອນ.

• ອົງປະກອບ-2: ການພັດທະນາດ້ານຕ່ອງໂສ້ມູນຄ່າ. ປະກອບມີ 3 ອົງປະກອບຍ່ອຍ: (i) ອົງປະກອບຍ່ອຍ 2.1 ເວທີປຶກສາຮ່ວມມີຫຼາຍຝ່າຍ; (ii) ອົງປະກອບຍ່ອຍ 2.2 ສິ່ງອຳນວຍຄວາມສະດວກໃນການລົງທຶນທຸລະກິດກະສິກຳ; (iii) ອົງປະກອບຍ່ອຍ 2.3 ການປັບປຸງການເຂົ້າເຖິງເສັ້ນທາງຊົນນະບົດ.

• ອົງປະກອບ 3- ການປັບປຸງດ້ານໂພຊະນາການ. ອົງປະກອບນີ້ຈະໄດ້ສົ່ງສົ່ງດ້ານໂພຊະນາການຢູ່ໂຮງຮຽນ, ການບໍລິໂພກອາຫານຫຼາຍຂຶ້ນ ແລະ ປັບປຸງຄຸນນະພາບການບໍລິໂພກອາຫານ ຢູ່ແຂວງໄຊຍະບູລີ ແລະ ຫລວງພະບາງ. ສຳລັບອີກສອງແຂວງຄື: ຫົວພັນ ແລະ ຊຽງຂວາງ ແມ່ນສະຫນັບສະຫນູນໂດຍ ADB-EU.

## B. ຜົນສຳເລັດໂດຍລວມ

ຜົນສຳເລັດຂອງການຈັດຕັ້ງປະຕິບັດກິດຈະກຳປະກອບມີ: (i) xxx; (ii) xxx; (iii) xxx (ນຳສະເໜີຄວາມຄືບໜ້າດ້ານຜົນສຳເລັດຂອງການຈັດຕັ້ງປະຕິບັດກິດຈະກຳຕົວຈິງໂດຍຫຍໍ້ຕາມລຳດັບ, ບໍ່ຄວນເກີນ ເຄິ່ງໜ້າ ໂດຍການສັງລວມປະເດັນທີ່ສຳຄັນ ແລະ ກິດຈະກຳຫລັກ ເພື່ອສາມາດສະຫລຸບໄດ້ໂດຍຫຍໍ້, ກະທັດຮັດ ແລະ ໄດ້ເນື້ອໃນ)

## C. ຜົນສຳເລັດການຈັດຕັ້ງປະຕິບັດກິດຈະກຳຮອດ ເດືອນ xx ປີ xxxx

ຜົນສຳເລັດການຈັດຕັ້ງປະຕິບັດກິດຈະກຳໂຄງການ ທຽບກັບແຜນປີເທົ່າກັບ xx%

ອົງປະກອບ-1: ການພັດທະນາກະເສດສຸມ

ຜົນສຳເລັດຫລັກປະກອບມີ: (i) xxx; (ii) xxx; (iii) xxx

ອົງປະກອບ-2: ການພັດທະນາດ້ານຕ່ອງໂສ້ມູນຄ່າ

ຜົນສຳເລັດຫລັກປະກອບມີ: (i) xxx; (ii) xxx; (iii) xxx

ອົງປະກອບ-3: ການປັບປຸງດ້ານໂພຊະນາການ

ຜົນສຳເລັດຫລັກປະກອບມີ: (i) xxx; (ii) xxx; (iii) xxx

## D. ຜົນສຳເລັດທຽບກັບຕົວຊີ້ວັດຂອງໂຄງການ

(ພາກນີ້ຈະລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດກິດຈະກຳ ຂອງຕົວຊີ້ວັດລະດັບ 1; The 1st level of indicator – OUTPUT) ໂດຍສ່ວນໃຫຍ່ແມ່ນຈະໄດ້ໃສ່ບົດລາຍງານ 6 ເດືອນ ແລະ ປະຈຳປີ. ສຳລັບບົດລາຍງານປະຈຳໄຕມາດແມ່ນບໍ່ຈຳເປັນສຳລັບພາກນີ້, ໃນກໍລະນີທີ່ຍັງບໍ່ທັນມີຄວາມຄືບຫນ້າແມ່ນໃຫ້ລະບຸພຽງແຕ່ຕົວຊີ້ວັດເທົ່ານັ້ນ ໂດຍບໍ່ຈຳເປັນໃສ່ຄວາມຄືບຫນ້າ ເພາະໂດຍປົກກະຕິແລ້ວຜົນໄດ້ຮັບຂອງໂຄງການແມ່ນຈະເກີດຂຶ້ນພາຍຫລັງການປະຕິບັດໄດ້ 1 ຫາ 2 ປີ ໂດຍອີງໃສ່ຂໍ້ມູນຂອງລະບົບຕິດຕາມ ແລະ ປະເມີນຜົນໂຄງການ

ອີງໃສ່ຄູ່ມືການຈັດຕັ້ງປະຕິບັດໂຄງການ ແລະ ຕົວຊີວັດໃນລະບົບຕິດຕາມ ແລະ ປະເມີນຜົນໂຄງການ ເຊິ່ງໄດ້ລະບຸບັນດາຜົນໄດ້ຮັບຂອງໂຄງການດັ່ງລຸ່ມນີ້:

• OP1: ການກະສິກຳແບບກະເສດສຸມໃນເຂດພື້ນທີ່ນາເຂົ້າແມ່ນ 140%: ຄວາມຄືບຫນ້າ: (xx%);

- OP2: ຄົວເຮືອນທີ່ໄດ້ຮັບເອົາປັດໃຈການຜະລິດປັບປຸງໃໝ່; ເທັກໂນໂລຊີໃໝ່ ຫຼື ແບບຢ່າງການຈັດຕັ້ງປະຕິບັດ 50% : ຄວາມຄືບຫນ້າ: (xx%);

- OP3: ຄົວເຮືອນທີ່ມີການຂາຍຜົນຜະລິດຈາກຟາມ ຫຼື ພື້ນທີ່ການຜະລິດເພີ່ມຂຶ້ນ 50%: ຄວາມຄືບຫນ້າ: (xx%);

- OP4: ຫົວໜ່ວຍທຸລະກິດທີ່ມີສ່ວນຮ່ວມທີ່ມີກຳໄລຈາກຜົນຕອບແທນ ຂອງການລົງທຶນ 90%: ຄວາມຄືບຫນ້າ: (xx%);

- OP5: ແມ່ຍິງທີ່ມີການປັບປຸງຄຸນນະພາບຂອງອາຫານ ປະເມີນຈາກ % ຂອງແມ່ຍິງທີ່ມີຄະແນນການກິນອາຫານປະຈາວັນຕໍ່າສຸດ (ແມ່ຍິງບໍລິໂພກອາຫານໃນແຕ່ລະວັນຢ່າງຫນ້ອຍ 5 ໝວດໃນ 10 ໝວດອາຫານ) 80%: ຄວາມຄືບຫນ້າ: (xx%).

## E. ການເບີກຈ່າຍ ແລະ ຄຸ້ມຄອງດ້ານການເງິນ

ການເບີກຈ່າຍທຽບກັບ AWPB ປີ xx ປະຕິບັດໄດ້ xx ໂດລາສະຫະລັດ (xx% ຂອງແຜນປີ) ໃນນັ້ນທຶນກູ້ຢືມ IFAD Loan no. 2000003089 ປະຕິບັດໄດ້ xx ໂດລາສະຫະລັດ (xx% ຂອງທຶນ IFAD ໃນແຜນປີ); ການປະກອບສ່ວນຂອງລັດຖະບານປະຕິບັດໄດ້ xx ໂດລາສະຫະລັດ (xx% ຂອງແຜນປີ).

## F. ບົດຮຽນຖອດຖອນໄດ້ ແລະ ຂໍ້ສະເໜີແນະ

- Xxxxxxxxxxxxxxxxxxxxxxxxxx;
- Xxxxxxxxxxxxxxxxxxxxxxxxxx;

## G. ແຜນການຈັດຕັ້ງປະຕິບັດໃນຕໍ່ຫນ້າ

- Xxxxxxxxxxxxxxxxxxxxxxxxxx;
- Xxxxxxxxxxxxxxxxxxxxxxxxxx;

## H. ເອກະສານຊ້ອນທ້າຍ

ຕາຕະລາງ-1: ຄວາມຄືບຫນ້າດ້ານກິດຈະກຳ ທຽບກັບແຜນປີ (ອີງໃສ່ລະບົບຖານຂໍ້ມູນຂອງຕິດຕາມ ແລະ ປະເມີນຜົນ)

ອົງປະກອບ ຫົວຫນ່ວຍ ແຜນປີ (AWPB) ປະຕິບັດໄດ້ % ຄວາມຄືບໜ້າທຽບ AWPB

ອົງປະກອບ 1

ອົງປະກອບ 2

ອົງປະກອບ 3

ລວມງົບທັງຫມົດ

ຕາຕະລາງ-2: ຄວາມຄືບຫນ້າດ້ານການເງິນ ທຽບກັບແຜນປີ (ອົງໃສ່ ແລະ ເອົາຈາກລະບົບການລາຍງານຂອງການເງິນເຊັ່ນ: ຄວາມຄືບຫນ້າດ້ານການເງິນແບ່ງຕາມອົງປະກອບ, ແບ່ງຕາມແຫລ່ງທຶນ ແລະ ຮ່ອງງົບປະມານ)

| ອົງປະກອບ | AWPB | ການເບີກຈ່າຍ ຮອດ dd/mm/yyyy | % ຄວາມຄືບໜ້າທຽບ AWPB |
|---|---|---|---|
| ອົງປະກອບ 1 | | | |
| ອົງປະກອບ 2 | | | |
| ອົງປະກອບ 3 | | | |
| ງົບປະມານການລົງທຶນ | | | |
| ງົບປະມານບໍລິຫານ | | | |
| ລວມງົບປະມານທັງຫມົດ | | | |